ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 954 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 04 ຕຸລາ 2023

# ຂໍ້ຕົກລົງ
# ວ່າດ້ວຍການກວດສອບພາຍນອກສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014;
- ອີງຕາມ ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ (ສະບັບປັບປຸງ) ສະບັບເລກທີ 184/ລບ, ລົງວັນທີ 20 ມິຖຸນາ 2022;
- ອີງຕາມ ດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ (ສະບັບປັບປຸງ) ສະບັບເລກທີ 471/ລບ, ລົງວັນທີ 02 ກໍລະກົດ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສະບັບປັບປຸງ) ສະບັບເລກທີ 695/ທຫລ, ລົງວັນທີ 06 ທັນວາ 2021;
- ອີງຕາມ ການຄົ້ນຄວ້າ ຂອງກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການກວດສອບພາຍນອກສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຖືກຕ້ອງ, ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ ແນໃສ່ຮັບປະກັນໃຫ້ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ຍືນຍົງ.

### ມາດຕາ 2 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ໃນເປົ້າໝາຍການກວດສອບພາຍນອກ.

**ມາດຕາ 3 ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ໃນເປົ້າໝາຍການກວດສອບພາຍນອກ**

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ໃນເປົ້າໝາຍການກວດສອບພາຍນອກ ມີດັ່ງນີ້:

1. ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;
2. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ມີຊັບສິນ ສິບຕື້ ກີບ ຂຶ້ນໄປ;
3. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທີ່ມີຊັບສິນ ສາມສິບຕື້ ກີບ ຂຶ້ນໄປ;
4. ບໍລິສັດເຊົ່າສິນເຊື່ອ.

**ມາດຕາ 4 ການຄັດເລືອກວິສາຫະກິດກວດສອບພາຍນອກ**

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ດໍາເນີນການຄັດເລືອກວິສາຫະກິດກວດສອບພາຍນອກ ດັ່ງນີ້:

1. ຄັດເລືອກວິສາຫະກິດກວດສອບທີ່ໄດ້ຮັບອະນຸຍາດດໍາເນີນວິສາຫະກິດກວດສອບ ຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ ແລະ ມີປະສົບການໃນການກວດສອບຢ່າງໜ້ອຍ ສອງ ປີ. ສໍາລັບ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ມີຜູ້ຖືຮຸ້ນລາຍໃຫຍ່ ຫຼື ເປັນນິຕິບຸກຄົນຕ່າງປະເທດ ຖືຮຸ້ນໃນສະຖາບັນການເງິນດັ່ງກ່າວ ສາມາດເລືອກໃຊ້ບໍລິການວິສາຫະກິດກວດສອບພາຍນອກຈາກຕ່າງປະເທດ ທີ່ໄດ້ມາດຕະຖານດຽວກັນກັບສໍານັກງານໃຫຍ່;

2. ພາຍຫຼັງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຄັດເລືອກວິສາຫະກິດກວດສອບພາຍນອກ ຕ້ອງແຈ້ງລາຍຊື່ ແລະ ເອກະສານທີ່ກ່ຽວຂ້ອງ ໃຫ້ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ບ່ອນທີ່ສໍານັກງານໃຫຍ່ຂອງຕົນຕັ້ງຢູ່ ເປັນຕົ້ນ ຮ່າງສັນຍາການກວດສອບ, ແຜນການກວດສອບ, ສໍາເນົາໃບທະບຽນວິສາຫະກິດ, ສໍາເນົາໃບອະນຸຍາດດໍາເນີນທຸລະກິດກວດສອບ, ສໍາເນົາໃບທະບຽນອາກອນ, ສໍາເນົາໃບຢັ້ງຢືນການເປັນສະມາຊິກ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ.

**ມາດຕາ 5 ການພິຈາລະນາວິສາຫະກິດກວດສອບພາຍນອກ**

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາເຫັນດີ ຫຼື ບໍ່ເຫັນດີ ຕໍ່ການຄັດເລືອກວິສາຫະກິດກວດສອບພາຍໃນເວລາ ເຈັດ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ.

ພາຍຫຼັງໄດ້ຮັບການເຫັນດີແລ້ວ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຈຶ່ງສາມາດເຊັນສັນຍາກັບວິສາຫະກິດກວດສອບ ຊຶ່ງສັນຍາກວດສອບມີອາຍຸການ ຫ້າ ປີ ແລະ ສາມາດຕໍ່ໄດ້ໜຶ່ງວາລະ ແຕ່ຕ້ອງປ່ຽນນັກກວດສອບຜູ້ໃໝ່ ພ້ອມທັງສົ່ງສໍາເນົາສັນຍາດັ່ງກ່າວໃຫ້ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ບ່ອນທີ່ສໍານັກງານໃຫຍ່ຂອງຕົນຕັ້ງຢູ່ ພາຍໃນເວລາ ເຈັດ ວັນລັດຖະການ ນັບແຕ່ວັນເຊັນສັນຍາ ເປັນຕົ້ນໄປ.

**ມາດຕາ 6 ການລາຍງານຜົນການກວດສອບພາຍນອກ**

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕ້ອງດໍາເນີນການກວດສອບພາຍນອກປະຈໍາປີ ໃຫ້ສໍາເລັດຕາມກໍານົດເວລາ ດັ່ງນີ້:

1. ບໍລິສັດເຊົ່າສິນເຊື່ອ ຕ້ອງດໍາເນີນການກວດສອບ ໃຫ້ສໍາເລັດພາຍໃນເດືອນ ມີນາ ຂອງປີຖັດໄປ;
2. ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ໃຫ້ສໍາເລັດພາຍໃນເດືອນ ເມສາ ຂອງປີຖັດໄປ;

3. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໃຫ້ສຳເລັດພາຍໃນເດືອນ ມິຖຸນາ ຂອງປີຖັດໄປ.

ພາຍຫຼັງສຳເລັດການກວດສອບແລ້ວ ຕ້ອງນຳສົ່ງສຳເນົາບົດລາຍງານຜົນການກວດສອບ ທີ່ຖືກເຊັນຮັບຮອງຈາກວິສາຫະກິດກວດສອບ ແລະ ເປົ້າໝາຍຖືກກວດສອບ ເປັນສະບັບພາສາລາວ ໃຫ້ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຫຼື  ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ບ່ອນທີ່ສຳນັກງານໃຫຍ່ຂອງຕົນຕັ້ງຢູ່ ພາຍໃນ ສິບ ວັນລັດຖະການ.

**ມາດຕາ 7 ການເປີດເຜີຍຜົນການກວດສອບພາຍນອກ**

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕ້ອງເປີດເຜີຍບົດລາຍງານຜົນການກວດສອບພາຍນອກ ປະຈຳປີຂອງຕົນ ພາຍໃນ ໜຶ່ງເດືອນ ພາຍຫຼັງສຳເລັດການກວດສອບ ໂດຍສາມາດເປີດເຜີຍຜ່ານເວັບໄຊຂອງຕົນ, ຈັດພິມເປັນປຶ້ມ, ແຜ່ນພັບ ຫຼື ດ້ວຍຮູບການອື່ນ ຕາມຄວາມເໝາະສົມ.

**ມາດຕາ 8 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນເປັນເຈົ້າການໃນການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ ໃຫ້ໄດ້ຮັບຜົນດີ.

ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 9 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍບໍລິສັດກວດສອບພາຍນອກສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 693/ທຫລ, ລົງວັນທີ 04 ທັນວາ 2020.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ບຸນເຫຼືອ ສິນໄຊວໍຣະວົງ